**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 2655 /ອຄ

ນະຄອນຫຼວງວຽງຈັນ, ວັນທີ 31.7.21... 2025

# ຂໍ້ຕົກລົງ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 550/ນຍ, ລົງວັນທີ 1 ກັນຍາ 2025;
- ອີງຕາມ ແຈ້ງການ ຂອງກະຊວງພາຍໃນ ສະບັບເລກທີ 175/ພນ, ລົງວັນທີ 24 ກັນຍາ 2021 ກ່ຽວກັບການຄົ້ນຄວ້າປັບປຸງກົງຈັກ ແລະ ຂໍ້ຕົກລົງວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງບັນດາກົມ ແລະ ທຽບເທົ່າ ຂັ້ນສູນກາງ, ພະແນກຂັ້ນແຂວງ ແລະ ຫ້ອງການຂັ້ນເມືອງ;
- ອີງຕາມ ໜັງສືສະເໜີ ຂອງກົມຈັດຕັ້ງ ສະບັບເລກທີ 471/ກຈ, ລົງວັນທີ 15 ຕຸລາ 2025 .

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງ ໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ, ແນໃສ່ການຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ປະຕິບັດກົດໝາຍ ແລະ ລະບຽບການຂອງລັດ ໃນການຄຸ້ມຄອງ, ກວດກາ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາວຽກງານອຸດສາຫະກຳ, ການເຊື່ອມໂຍງທາງດ້ານເສດຖະກິດ ແລະ ການຄ້າ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ຂຽນເປັນໂຕອັກສອນຫຍໍ້: "ພອຄ ..." ຂຽນເປັນພາສາອັງກິດ: Department of Industry and Commerce of …. Province, ຂຽນຫຍໍ້: "DOIC..." ແມ່ນການຈັດຕັ້ງດ້ານວິຊາການ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ຂັ້ນທ້ອງຖິ່ນ ແລະ ອີງ ການປົກຄອງແຂວງ, ນະຄອນຫຼວງວຽງຈັນ, ມີພາລະບົດບາດ ເປັນເສນາທິການໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ (ສາຍຕັ້ງ) ແລະ ອີງການປົກຄອງແຂວງ, ນະຄອນຫຼວງວຽງຈັນ (ສາຍຂວາງ) ໃນການຄຸ້ມຄອງບໍລິຫານລັດ ຕາມການແບ່ງຂັ້ນຄຸ້ມຄອງໃນຂົງເຂດວຽກງານອຸດສາຫະກຳ, ພະລັງງານ, ບໍ່ແຮ່ ແລະ ການຄ້າ ໃນຂອບເຂດທ້ອງຖິ່ນຕົນ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

### ມາດຕາ 3 ໜ້າທີ່

ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ມີໜ້າທີ່ ດັ່ງນີ້:

1. ປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິຕົກລົງຂອງສະພາແຫ່ງຊາດ, ລັດຖະບັນຍັດຂອງປະທານປະເທດ, ດຳລັດ, ຄຳສັ່ງ, ຂໍ້ຕົກລົງ, ແຈ້ງການ, ຄຳແນະນຳ ຂອງລັດຖະບານ, ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ແລະ ອຳນາດການປົກຄອງແຂວງ, ນະຄອນຫຼວງວຽງຈັນ;
2. ຜັນຂະຫຍາຍແນວທາງ, ແຜນນະໂຍບາຍຂອງພັກ, ມະຕິຂອງສະພາປະຊາຊົນຂັ້ນທ້ອງຖິ່ນ, ນະໂຍບາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງອົງການປົກຄອງແຂວງ, ນະຄອນຫຼວງວຽງຈັນ ມາເປັນແຜນຍຸດທະສາດ, ແຜນພັດທະນາໄລຍະຍາວ, ໄລຍະກາງ ແລະ ໄລຍະສັ້ນ, ແຜນງານ, ແຜນງົບປະມານ ແລະ ໂຄງການລະອຽດຂອງພະແນກ ພ້ອມທັງຄຸ້ມຄອງ, ຊຸກຍູ້, ຕິດຕາມ, ກວດກາ ແລະ ສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດແຜນການ ໃຫ້ກະຊວງ ແລະ ອຳນາດການປົກຄອງທ້ອງຖິ່ນ, ສະພາປະຊາຊົນແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນກ່ຽວຂ້ອງ;
3. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ແຜນພັດທະນາ, ກົດໝາຍ ແລະ ນິຕິກຳ ກ່ຽວກັບວຽກງານອຸດສາຫະກຳ ແລະ ການຄ້າ ໃນຂອບເຂດທ້ອງຖິ່ນຂອງຕົນໃຫ້ຮັບຊາບຢ່າງທົ່ວເຖິງ;
4. ຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ ຮ່າງກົດໝາຍ, ລະບຽບການ, ມາດຕະຖານເຕັກນິກ, ໂຄງສ້າງລາຄາໄຟຟ້າ ແລະ ນິຕິກຳອື່ນໆຂອງຂະແໜງອຸດສາຫະກຳ ແລະ ການຄ້າ;
5. ຄຸ້ມຄອງ, ສົ່ງເສີມ ແລະ ພັດທະນາວຽກງານອຸດສາຫະກຳ ແລະ ການຄ້າພາຍໃນແຂວງ/ ນະຄອນຫຼວງ ໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ໃຫ້ມີຄວາມຍືນຍົງ ດ້ວຍການເອື້ອອຳນວຍຄວາມສະດວກ, ການນຳໃຊ້ນະວັດຕະກຳໃໝ່ ແລະ ເຕັກໂນໂລຊີເຂົ້າໃນການຜະລິດ ເພື່ອເພີ່ມຜະລິດຕະພັນອຸດສາຫະກຳໃຫ້ຫຼາກຫຼາຍ, ການສ້າງມູນຄ່າເພີ່ມ ແລະ ດຳເນີນການຜະລິດຕາມທິດສີຂຽວ-ຍືນຍົງ ແລະ ເປັນມິດກັບສິ່ງແວດລ້ອມ;
6. ສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງ ວຽກງານອຸດສາຫະກຳປຸງແຕ່ງທຸກປະເພດ ແລະ ເຂດ-ນິຄົມອຸດສາຫະກຳ ເປັນຕົ້ນ ວຽກງານສະຖິຕິອຸດສາຫະກຳ, ການສ້າງຕັ້ງໂຮງງານ ແລະ ການດຳເນີນກິດຈະການໂຮງງານ, ການຄຸ້ມຄອງເຄື່ອງຈັກ, ຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພອຸດສາຫະກຳ, ຄຸ້ມຄອງສິ່ງເສດເຫຼືອອັນຕະລາຍ, ສົ່ງເສີມການຜະລິດທີ່ສະອາດ ແລະ ອຸດສາຫະກຳສີຂຽວ ຕາມຂອບເຂດສິດຂັ້ນຄຸ້ມຄອງຂັ້ນ ແຂວງ, ນະຄອນຫຼວງ ໃຫ້ສອດຄ່ອງຕາມລະບຽບ, ກົດໝາຍ ແລະ ຂໍ້ຕົກລົງການແບ່ງໜ້າວຽກຂອງຂະແໜງອຸດສາຫະກຳ ແລະ ການຄ້າລະຫວ່າງສູນກາງ ແລະ ທ້ອງຖິ່ນ;
7. ຄຸ້ມຄອງວຽກງານເຄມີຂອງທ້ອງຖິ່ນຕົນໂດຍການຈົດທະບຽນເຄມີ, ການອະນຸຍາດນຳເຂົ້າ-ສົ່ງອອກ, ສົ່ງຜ່ານເຄມີ, ເກັບກຳຂໍ້ມູນ ແລະ ຄຸ້ມຄອງເຄມີອຸດສາຫະກຳ ຕາມສິດຂັ້ນຄຸ້ມຄອງທີ່ໄດ້ແບ່ງໃຫ້ທ້ອງຖິ່ນຮັບຜິດຊອບ;
8. ເປັນເສນາທິການໃຫ້ແຂວງ, ນະຄອນຫຼວງໃນການ ຄຸ້ມຄອງ, ຕິດຕາມ, ກວດກາ ໂຄງການ, ກິດຈະການ ແລະ ທຸລະກິດ ດ້ານອຸດສາຫະກຳພະລັງງານ, ບໍ່ແຮ່ ແລະ ການຄ້າທີ່ຕັ້ງຢູ່ທ້ອງຖິ່ນຂອງຕົນ ໃຫ້ອົງການປົກຄອງແຂວງ/ນະຄອນຫຼວງ ແລະ ກະຊວງອຸດສາຫະກຳ ແລະ ການຄ້າຮັບຊາບເປັນປົກກະຕິ;
9. ຄຸ້ມຄອງບັງຄັບໃຊ້ມາດຕະຖານເຕັກນິກ ແລະ ລະບຽບການ, ຮັບຮອງການສຶກສາສຳຫຼວດ, ອອກແບບ, ກໍ່ສ້າງ, ດຳເນີນງານບຳລຸງຮັກສາ ແລະ ສ້າງແຜນຮັບມືສຸກເສີນ ຂອງໂຄງການດ້ານພະລັງງານທີ່ຕັ້ງຢູ່ທ້ອງຖິ່ນຕົນຮັບຜິດຊອບ ໃຫ້ສອດຄ່ອງຕາມລະບຽບ, ກົດໝາຍ ແລະ ຂໍ້ຕົກລົງການແບ່ງໜ້າວຽກຂອງຂະ

ແໜງອຸດສາຫະກຳ ແລະ ການຄ້າລະຫວ່າງສູນກາງ ແລະ ທ້ອງຖິ່ນ;

10. ເປັນເຈົ້າການຈັດຕັ້ງປະຕິບັດໂຄງການສາທິດ, ນຳໃຊ້ພະລັງງານທົດແທນ ແລະ ໂຄງການພັດທະນາໄຟຟ້າຊົນນະບົດ ແລະ ສ້າງຖານຂໍ້ມູນດ້ານພະລັງງານ ແລະ ບໍ່ແຮ່ (ລວມທັງພະລັງງານທົດແທນ ແລະ ໄຟຟ້າຊົນນະບົດ) ໃນຂອບເຂດທ້ອງຖິ່ນຕົນຮັບຜິດຊອບ;

11. ກວດກາປົກຫຼັກໝາຍໂຄງການສຳປະທານແຮ່ທາດ ທີ່ມີການມອບໝາຍ ແລະ ອະນຸມັດຈາກກະຊວງອຸດສາຫະກຳ ແລະ ການຄ້າ;

12. ເປັນເສນາທິການໃຫ້ອົງການປົກຄອງແຂວງ/ນະຄອນຫຼວງໃນການຮ່າງແຜນພັດທະນາທໍລະນີສາດ ແລະ ແຮ່ທາດ;

13. ຄຸ້ມຄອງ, ຕິດຕາມ ແລະ ກວດກາການເຄື່ອນຍ້າຍແຮ່ທາດໃນທ້ອງຖິ່ນຕົນຮັບຜິດຊອບ;

14. ພິຈາລະນາອະນຸມັດໂຄງການສຳປະທານແຮ່ທາດ ປະເພດແຮ່ທາດອະໂລຫະ ທີ່ມີເນື້ອທີ່ບໍ່ເກີນ 4 ເຮັກຕາ ຕາມທີ່ໄດ້ລະບຸໄວ້ໃນກົດໝາຍວ່າດ້ວຍແຮ່ທາດ (ສະບັບປັບປຸງ);

15. ເປັນກອງເລຂາຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການຂົນສົ່ງ ຂັ້ນແຂວງ ໃນການຈັດຕັ້ງປະຕິບັດວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການຂົນສົ່ງ;

16. ສະຫຼຸບ ແລະ ລາຍງານສະພາບການຈັດຕັ້ງປະຕິບັດວຽກງານການນຳເຂົ້າ ແລະ ສົ່ງອອກສິນຄ້າ, ການອຳນວຍຄວາມສະດວກທາງດ້ານການຄ້າ, ມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ (NTMs) ພາຍໃນ, ການຄ້າຊາຍແດນ, ສິນຄ້າຜ່ານແດນ, ການນຳເຂົ້າ-ສົ່ງອອກຊົ່ວຄາວ ແລະ ການນຳເຂົ້າເພື່ອສົ່ງອອກຕໍ່, ແຫຼ່ງກຳເນີດສິນຄ້າ ໃຫ້ກົມການຄ້າຕ່າງປະເທດ ເປັນແຕ່ລະໄລຍະ;

17. ຄຸ້ມຄອງ ແລະ ຕິດຕາມ ກວດກາມາດຕະຖານດ້ານເຕັກນິກໂຮງງານ, ເຄື່ອງຈັກ, ເຕັກໂນໂລຊີ ແລະ ຂະບວນການຜະລິດ, ມາດຕະຖານຜະລິດຕະພັນ, ຄວາມປອດໄພ, ສຸຂະນາໄມ, ສິ່ງແວດລ້ອມຂອງໂຮງງານອຸດສາຫະກຳ, ເຂດ-ນິຄົມອຸດສາຫະກຳ ແລະ ດຳເນີນທຸລະກິດກ່ຽວກັບເຄມີ; ເກັບກຳ, ສັງລວມ ແລະ ລາຍງານວຽກງານສະຖິຕິອຸດສາຫະກຳ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຕາມການແບ່ງຂັ້ນຄຸ້ມຄອງ; ຮັບ ແລະ ແກ້ໄຂຄຳຮ້ອງຟ້ອງກ່ຽວກັບວຽກງານອຸດສາຫະກຳ, ເຄມີ ແລະ ເຂດ-ນິຄົມອຸດສາຫະກຳ;

18. ໃຫ້ຄຳປຶກສາ ແລະ ຊຸກຍູ້ສົ່ງເສີມ ຫົວໜ່ວຍທຸລະກິດ ຂອງແຂວງ, ນະຄອນຫຼວງ ທີ່ເຮັດການສົ່ງອອກສິນຄ້າ, ການໂຄສະນາຮູບແບບອອນລາຍ ຫັນມານຳໃຊ້ເຄື່ອງມືທັນສະໄໝ ເປັນຕົ້ນການຄ້າທາງເອເລັກໂຕຼນິກ (e-commerce) ແລະ ການສ້າງເວັບໄຊ ອີຄອມເມີສ;

19. ປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ຊຸກຍູ້ສົ່ງເສີມ, ເອື້ອອຳນວຍຄວາມສະດວກ, ເພື່ອພັດທະນາສິນຄ້າ "ໜຶ່ງເມືອງໜຶ່ງຜະລິດຕະພັນ" (ODOP); ເກັບກຳ, ສັງລວມ ແລະ ສ້າງຖານຂໍ້ມູນຂ່າວສານການຄ້າ, ສິນຄ້າ, ຊອກຕະຫຼາດ, ພາຍໃນ ແລະ ຕ່າງປະເທດ ເພື່ອຮອງຮັບການຜະລິດທີ່ນັບມື້ນັບຂະຫຍາຍຕົວ, ເກັບກຳລົງທະບຽນຜູ້ຜະລິດ ແລະ ຜູ້ປະກອບກິດຈະການ; ຄຸ້ມຄອງ, ສົ່ງເສີມ, ຊີ້ນຳວຽກງານຕະຫຼາດນັດ ແລະ ວາງສະແດງສິນຄ້າ;

20. ກຳນົດເຂດອຸດສາຫະກຳ, ຕິດຕາມ ແລະ ຊຸກຍູ້ ການພັດທະນາເຂດອຸດສາຫະກຳໃນທ້ອງຖິ່ນຂອງຕົນ ໂດຍປະສານງານກັບພາກສ່ວນກ່ຽວຂ້ອງ;

21. ຜັນຂະຫຍາຍຍຸດທະສາດໃນການສົ່ງເສີມ ແລະ ພັດທະນາຫັດຖະກຳ ຂອງແຂວງ/ນະຄອນຫຼວງ ໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ; ສະເໜີປັບປຸງ ກົດໝາຍ, ລະບຽບການ, ສົ່ງເສີມ ແລະ ຄຸ້ມຄອງກິດຈະການຫັດ ຖະກຳ; ພິຈາລະນາອອກໃບຢັ້ງຢືນ, ຂະຫຍາຍ, ຕໍ່ອາຍຸ ແລະ ສະເໜີລຶບລ້າງໃບຢັ້ງຢືນດຳເນີນກິດຈະການຫັດຖະກຳ ຕາມການແບ່ງຂັ້ນຄຸ້ມຄອງ;

22. ຊຸກຍູ້, ສົ່ງເສີມ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ຈນກ) ພາຍໃນແຂວງ, ນະຄອນຫຼວງ ກ່ຽວກັບວຽກງານພັດທະນາ ຈນກ, ວຽກງານສົ່ງເສີມຜູ້ປະກອບກິດຈະການ ແລະ ສະຕາດອັບ, ວຽກງານຜະລິດຕະພາບ ແລະ ຄຸນນະພາບ, ວຽກງານພັດທະນາສິນຄ້າ, ວຽກງານຫັດຖະກຳ ແລະ ວຽກງານການເຂົ້າເຖິງແຫຼ່ງທຶນຂອງ ຈນກ ຕາມທິດທາງ ແລະ ນະໂຍບາຍທີ່ຂະແໜງການໄດ້ກຳນົດ;

23. ຄຸ້ມຄອງ, ຕິດຕາມ ບັນດາຫົວໜ່ວຍທຸລະກິດໃຫ້ເຄື່ອນໄຫວທຸລະກິດສອດຄ່ອງກັບລະບຽບກົດໝາຍ; ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງເພື່ອສົ່ງເສີມ ແລະ ພັດທະນາ ບັນດາຫົວໜ່ວຍທຸລະກິດ ແລະ ການຈັດຕັ້ງທຸລະກິດ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນໃຫ້ມີຄວາມເຂັ້ມແຂງ;

24. ຊຸກຍູ້, ສົ່ງເສີມ ແລະ ຮ່ວມມືກັບສະພາການຄ້າ ແລະ ອຸດສາຫະກຳແຂວງ, ນະຄອນຫຼວງວຽງຈັນ, ກຸ່ມ, ສະມາຄົມທຸລະກິດພາຍໃນທ້ອງຖິ່ນ, ບັນດາບໍລິສັດ, ລັດວິສາຫະກິດທີ່ຂຶ້ນກັບຄວາມຮັບຜິດຊອບຂອງພະແນກ, ໃນການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳຕ່າງໆ ຕະຫຼອດເຖິງນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາ ໃນຂົງເຂດວຽກງານອຸດສາຫະກຳ ແລະ ການຄ້າ ທີ່ນອນໃນຄວາມຮັບຜິດຊອບຂອງຕົນ;

25. ຄຸ້ມຄອງ, ຕິດຕາມ, ຈັດຕັ້ງປະຕິບັດ ວຽກງານຊັບສິນທາງປັນຍາ ເປັນຕົ້ນ ການໃຫ້ຄຳປຶກສາ, ຮັບຄຳຮ້ອງຂໍຈົດທະບຽນ ແບບອຸດສາຫະກຳ, ເຄື່ອງໝາຍການຄ້າ, ຮັບຄຳສະເໜີ ແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ, ແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານກ່ຽວກັບຊັບສິນທາງປັນຍາ, ແກ້ໄຂການລະເມີດຊັບສິນທາງປັນຍາ, ຊຸກຍູ້ການສ້າງຕັ້ງສະມະຄົມຖິ່ນກຳເນີດ, ອົງການລິຂະສິດລວມໝູ່ ພ້ອມທັງຈັດຝຶກອົບຮົມ ແລະ ສົ່ງເສີມການຄົ້ນຄິດສິ່ງປະດິດໃໝ່, ການປະດິດຄິດແຕ່ງໃໝ່ ຮ່ວມມືກັບຂະແໜງ ການທີ່ກ່ຽວຂ້ອງ ໃນການຊຸກຍູ້, ສົ່ງເສີມ ແລະ ພັດທະນາ ການສ້າງມູນຄ່າເພີ່ມໃຫ້ສິນຄ້າ, ການຕໍ່ຍອດການອອກແບບ, ການສ້າງຍີ່ຫໍ້, ການຮັກສາເອກະລັກສະເພາະ, ການເຂົ້າເຖິງຕະຫລາດ ແລະ ການສ້າງຄວາມອາດສາມາດແຂ່ງຂັນໃຫ້ແກ່ພາກທຸລະກິດ ທີ່ຕິດພັນກັບຊັບສິນທາງປັນຍາໃນຂອບເຂດຄວາມຮັບຜິດ ຊອບຂອງທ້ອງຖິ່ນຂອງຕົນ.

26. ສ້າງພື້ນຖານໂຄງລ່າງທາງດ້ານເຕັກນິກວິຊາການວຽກງານມາດຕະຖານ ແລະ ວັດແທກ;

27. ຕິດຕາມ, ກວດກາ ແລະ ເກັບກຳຂໍ້ມູນ ໝໍ້ນັບກະແສໄຟຟ້າ, ໝໍ້ແທກນ້ຳປະປາ ທີ່ຕິດຕັ້ງໄປແລ້ວພາຍໃນແຂວງ, ນະຄອນຫຼວງວຽງຈັນ;

28. ຕິດຕາມ, ເກັບກຳ, ຂໍ້ມູນລົດບັນທຸກນ້ຳມັນເຊື້ອໄຟ ທີ່ໝົດອາຍຸໃບຢັ້ງຢືນການກວດທຽບບໍລິມາດ ພ້ອມທັງໃຫ້ບໍລິການຕໍ່ອາຍຸໃບຢັ້ງຢືນ ທີ່ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ;

29. ກວດສອບ, ກວດຄືນຊິງຊັ່ງວັດຖຸມີຄ່າ ແລະ ຊິງຊັ່ງທີ່ສາມາດຊັ່ງນ້ຳໜັກຫຼາຍກວ່າ 150 ກິໂລກຼາມ ຫາ 2000 ກິໂລກຼາມ ຕາມສະຖານທີ່ບໍລິການ;

30. ກວດສອບຜະລິດຕະພັນສິນຄ້າຫຸ້ມຫໍ່ຕາມຮ້ານຈຳໜ່າຍ (ຮ້ານຂາຍຍົກ-ຂາຍຍ່ອຍ); ກວດສອບບໍລິມາດສຸດທິຂອງຜະລິດຕະພັນນ້ຳດື່ມຕາມໂຮງງານຜະລິດນ້ຳດື່ມ ແລະ ຈຳໜ່າຍພາຍໃນແຂວງ, ນະຄອນຫຼວງວຽງຈັນ ທີ່ຍັງບໍ່ທັນໄດ້ຮັບການຢັ້ງຢືນກາໝາຍມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ;

31. ຕິດຕາມ, ເກັບກຳຂໍ້ມູນ, ຄຸ້ມຄອງເຄື່ອງມືອຸປະກອນວັດແທກ ແລະ ນຳໃຊ້ແມ່ແບບວັດແທກ, ຢູ່ໃນຄວາມຮັບຜິດຊອບຂອງຕົນ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ທີ່ກຳນົດໄວ້;

32. ຮັບຄຳສະເໜີ, ຄຳຮ້ອງຮຽນຕ່າງໆ ທີ່ມີຕໍ່ຂະແໜງອຸດສາຫະກຳ ແລະ ການຄ້າ ເພື່ອພິຈາລະນານຳສະເໜີຂໍຄຳເຫັນຈາກອົງການປົກຄອງແຂວງ, ນະຄອນຫຼວງ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ
ແລ້ວ ດຳເນີນການແກ້ໄຂ;

33. ຄົ້ນຄ້ວາພິຈາລະນາການອອກໃບອະນຸຍາດ, ຕໍ່ໃບອະນຸຍາດ, ສັ່ງໂຈະ, ສັ່ງຢຸດເຊົາໃນການດຳເນີນກິດຈະການທີ່ຂຶ້ນກັບຂະແໜງອຸດສາຫະກຳ ແລະ ການຄ້າ ຕາມລະບຽບການໃນຂອບເຂດຕົນຮັບຜິດຊອບ;

34. ຄຸ້ມຄອງຊັບສິນບັດ, ພາຫະນະ ແລະ ຊັບສິນ ຂອງພະແນກ; ຄຸ້ມຄອງບໍລິຫານວຽກງານປະຈຳວັນ ແລະ

ເຮັດວຽກພິທີການຂອງພະແນກ; ລວມທັງຂຶ້ນແຜນງົບປະມານໃຊ້ຈ່າຍປະຈຳ ປີ, ງວດ ແລະ ແຕ່ລະເດືອນ; ຄຸ້ມຄອງລາຍຮັບ-ລາຍຈ່າຍຕາມແຜນງົບປະມານ; ຄຸ້ມຄອງຄັງເງິນສົດຂອງພະແນກ, ຮັບຜິດ ຊອບບັນຊີເງິນເດືອນພະນັກງານ-ລັດຖະກອນ ແລະ ສະຫຼຸບລາຍງານຂັ້ນເທິງຂອງຕົນ ເປັນແຕ່ລະໄລຍະ;

35. ເປັນເສນາທິການໃນການປະສານສົມທົບ ແລະ ຈັດຕັ້ງຜັນຂະຫຍາຍວຽກງານສົ່ງເສີມຄວາມກ້າວໜ້າແມ່ຍິງ, ແມ່ ແລະ ເດັກ, ສິດສະເໝີພາບຍິງ-ຊາຍ ໃນຂົງເຂດຄວາມຮັບຜິດຊອບຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ;

36. ພົວພັນຮ່ວມມື ແລະ ປະສານງານກັບພາກສ່ວນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ເພື່ອລະດົມເອົາການຮ່ວມມື, ຊ່ວຍເຫຼືອ ແລະ ສະໜັບສະໜູນເຂົ້າໃນການພັດທະນາຂົງເຂດອຸດສາຫະກຳ ແລະ ການຄ້າ ໃນທ້ອງຖິ່ນຂອງຕົນ ເປັນແຕ່ລະໄລຍະ;

37. ສ້າງລະບົບເກັບກຳສັງລວມ, ວິເຄາະ ແລະ ສະໜອງສະຖິຕິຂອງຂະແໜງອຸດສາຫະກຳ ແລະ ການຄ້າ, ຈັດຫາງົບປະມານ, ໂດຍສະເພາະງົບປະມານລົງທຶນຂອງລັດ, ງົບປະມານບ້ວງດັດສົມ-ສົ່ງເສີມ, ບ້ວງຊື້ໃໝ່ ແລະ ບ້ວງການຊ່ວຍເຫຼືອຂອງຕ່າງປະເທດ ເພື່ອຮັບໃຊ້ວຽກແຜນພັດທະນາຂອງຂະແໜງອຸດສາຫະກຳ ແລະ ການຄ້າ ແຕ່ລະປີ ແລະ ແຕ່ລະໄລຍະ, ພົວພັນຮ່ວມມືດ້ານເສດຖະກິດການຄ້າກັບແຂວງໃກ້ຄຽງຂອງບັນດາປະເທດເພື່ອນບ້ານ ແລະ ຄູ່ຮ່ວມພັດທະນາ ຕາມນະໂຍບາຍຂອງລັດຖະບານ ແນໃສ່ຍາດແຍ່ງການຊ່ວຍເຫຼືອ ແລະ ສ້າງສະພາບແວດລ້ອມທີ່ເອື້ອອຳນວຍຄວາມສະດວກ ເພື່ອສົ່ງເສີມການຄ້າ ແລະ ການລົງທຶນ, ເປັນໃຈກາງໃນການຜັນຂະຫຍາຍວຽກງານເຊື່ອມໂຍງ-ເຊື່ອມຈອດເສດຖະກິດກັບອະນຸພາກພື້ນ, ພາກພື້ນ ແລະ ສາກົນ ເພື່ອພັດທະນາວຽກງານອຸດສາຫະກຳປຸງແຕ່ງ ແລະ ການຄ້າ ໃຫ້ເກີດຜົນເປັນຈິງໃນທ້ອງຖິ່ນຂອງຕົນ;

38. ຄົ້ນຄວ້າຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດນິຕິກຳກ່ຽວກັບວຽກງານ ຈັດຕັ້ງ-ພະນັກງານ ໃນການປັບປຸງພາລະບົດບາດ- ກົງຈັກການຈັດຕັ້ງ, ການຂຽນກຳນົດຕຳແໜ່ງງານ, ການຂຶ້ນແຜນກຳນົດພະນັກງານນຳພາ-ຄຸ້ມຄອງ, ການສ້າງແຜນບຳລຸງກໍ່ສ້າງພະນັກງານ, ການຄຸ້ມຄອງພະນັກງານ, ການແຕ່ງຕັ້ງ-ຍົກຍ້າຍ-ສັບຊ້ອນ ພະນັກງານ, ການຝຶກອົບຮົມ ແລະ ພັດທະນາພະນັກງານ-ລັດຖະກອນ, ການປະຕິບັດນະໂຍບາຍຍ້ອງຍໍ ແລະ ລົງວິໄນຕໍ່ພະນັກງານ, ການປະເມີນຜົນການຈັດຕັ້ງປະຕິບັດວຽກງານຂອງລັດຖະກອນປະຈຳປີ, ແລະ ການປະຕິບັດນະໂຍບາຍຕ່າງໆ ໃຫ້ຖືກຕ້ອງຕາມກົດໝາຍ, ລະບຽບການ ແລະ ຕາມການແບ່ງຂັ້ນຄຸ້ມຄອງ; ພ້ອມທັງສະຫຼຸບລາຍງານ ສະພາບການເຄື່ອນໄຫວວຽກງານຮອບດ້ານ ຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ໃຫ້ກະຊວງ ຮັບຊາບ ໃນແຕ່ລະໄລຍະ;

39. ຕິດຕາມ, ກວດກາຢ່າງເປັນປົກກະຕິ ຕໍ່ໜ້າທີ່, ຄວາມຮັບຜິດຊອບຂອງການຈັດຕັ້ງ ແລະ ບຸກຄົນຢູ່ໃນອົງການບໍລິຫານລັດຂັ້ນຂອງຕົນ ກ່ຽວກັບການຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຕ່າງໆ ຂອງລັດ; ຕິດຕາມ, ກວດກາເລີ່ມແຕ່ທິວທີ ການຈັດຕັ້ງປະຕິບັດແຜນການ-ແຜນງົບປະມານ ແລະ ໂຄງການລົງທຶນຂອງລັດ; ຕິດຕາມ, ກວດກາແກ້ໄຂຄຳຮ້ອງຟ້ອງ-ຮ້ອງທຸກ ແລະ ຄຳສະເໜີຂອງບຸກຄົນ ຫຼື ການຈັດຕັ້ງ ທີ່ພົວພັນກັບການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຂະແໜງການ ເພື່ອແກ້ໄຂໃຫ້ຖືກຕ້ອງ ແລະ ທັນການ; ຕ້ານ ແລະ ສະກັດກັ້ນການສໍ້ລາດບັງຫຼວງ;

40. ຄົ້ນຄວ້າແບ່ງຄວາມຮັບຜິດຊອບ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດວຽກງານທາງດ້ານວິຊາການ ຂອງຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ ຕາມກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ຕາມທິດ 3 ສ້າງ ແລະ ຕາມການແບ່ງຂັ້ນຄຸ້ມຄອງ; ພ້ອມທັງຊຸກຍູ້ ຕິດຕາມ, ກວດກາ ແລະ ສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດ ໃຫ້ສາຍຕັ້ງ ແລະ ສາຍຂວາງ ຢ່າງເປັນປົກກະຕິ;

41. ເກັບກຳ, ສະໜອງຂໍ້ມູນຂ່າວສານ, ລາຍງານສະພາບການເຄື່ອນໄຫວວຽກງານ ໃຫ້ແກ່ ຄະນະພັກ, ຄະນະ

ນໍາ ອົງການປົກຄອງແຂວງ, ນະຄອນຫຼວງ, ກະຊວງອຸດສາຫະກໍາ ແລະ ການຄ້າ ຢ່າງເປັນປົກກະຕິ ແລະ ທັນເວລາ;

42. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງກະຊວງ, ອໍານາດການປົກຄອງແຂວງ, ນະຄອນຫຼວງວຽງຈັນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 4 ຂອບເຂດສິດ**

**ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ມີສິດ ດັ່ງນີ້:**

1. ຄົ້ນຄວ້າ ປະກອບຄໍາເຫັນໃນການສະເໜີສ້າງ, ປັບປຸງ ຫຼື ຍົກເລີກກົດໝາຍ, ລັດຖະບັນຍັດ, ດໍາລັດ ທີ່ກ່ຽວຂ້ອງກັບວຽກງານຂະແໜງອຸດສາຫະກໍາ ແລະ ການຄ້າ ຕໍ່ກະຊວງອຸດສາຫະກໍາ ແລະ ການຄ້າ;
2. ອອກຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການ ເພື່ອຄຸ້ມຄອງບໍລິຫານລັດ ໃນພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງ;
3. ສະເໜີປັບປຸງ ຫຼື ລົບລ້າງຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ, ແຈ້ງການ ແລະ ນິຕິກໍາອື່ນໆ ທີ່ຂັດກັບແນວທາງນະໂຍບາຍຂອງພັກ, ກົດຫມາຍ ແລະ ລະບຽບການຂອງລັດ, ບໍ່ສອດຄ່ອງກັບພາລະບົດບາດ ແລະ ສະພາບຕົວຈິງ ຂອງພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ;
4. ອອກ, ໂຈະ, ຖອນ, ຍົກເລີກ, ລົບລ້າງ ໃບອະນຸຍາດ ແລະ ໃບຢັ້ງຢືນ ຕ່າງໆ ໃນຂົງເຂດອຸດສາຫະກໍາ ແລະ ການຄ້າ ທີ່ຢູ່ໃນພາລະບົດບາດຂອງພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງ ຕາມກົດໝາຍ ແລະ ລະບຽບການ;
5. ເຂົ້າຮ່ວມ, ເຈລະຈາ ແລະ ປະກອບຄໍາເຫັນ ໃນກອງປະຊຸມຕ່າງໆ ເພື່ອຄົ້ນຄວ້າອະທິບາຍ, ປຶກສາຫາລືກ່ຽວກັບວຽກງານຂອງຂະແໜງອຸດສາຫະກໍາ ແລະ ການຄ້າ ຕາມລະບຽບຫຼັກການ ແລະ ຕາມການມອບໝາຍ ຂອງຂັ້ນເທິງ ໃນແຕ່ລະໄລຍະ;
6. ພົວພັນເຈລະຈາ, ເຊັນສັນຍາ, ເຊັນບົດບັນທຶກກັບອົງການຈັດຕັ້ງ, ອົງການນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ໃນບັນຫາທີ່ກ່ຽວພັນເຖິງຄວາມຮັບຜິດຊອບຂອງຕົນ ບົນພື້ນຖານການປະສານສົມທົບແລະເປັນເອກະພາບກັບພາກສ່ວນທີ່ກ່ຽວຂ້ອງອື່ນໆ ທີ່ມີສ່ວນພົວພັນກັບການປະຕິບັດໜ້າທີ່ຂອງຕົນຕາມການມອບໝາຍຂອງກະຊວງ ແລະ ອໍານາດການປົກຄອງແຂວງ ເພື່ອໃຫ້ຖືກຕ້ອງຕາມລະບຽບຫຼັກການທີ່ໄດ້ກໍານົດໄວ້;
7. ຄົ້ນຄວ້າເກັບກໍາຂໍ້ມູນຫຼັກຖານ ແລະ ສະເໜີວິທີການແກ້ໄຂກ່ຽວກັບຄໍາຮ້ອງຄໍາສະເໜີ ຂອງພະນັກງານ-ລັດຖະກອນ ແລະ ພົນລະເມືອງ ຕາມກົດໝາຍ ແລະ ລະບຽບການ;
8. ຮຽກປະຊຸມ, ຄົ້ນຄວ້າ, ແກ້ໄຂບັນຫາຕ່າງໆ ທີ່ກ່ຽວຂ້ອງກັບພາລະບົດບາດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນ;
9. ຕົກລົງ ແລະ ເຊັນເອກະສານຕ່າງໆ ຕາມຂອບເຂດສິດຂອງພະແນກ;
10. ພົວພັນກັບພາກສ່ວນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍຂອງຂັ້ນເທິງ;
11. ຄຸ້ມຄອງ, ນໍາໃຊ້ງົບປະມານ, ຊັບສິນຂອງລັດ ທີ່ຢູ່ໃນຄວາມຮັບຜິດຊອບ ຂອງພະແນກ ຕາມກົດໝາຍ ແລະ ລະບຽບກໍານົດ ແລະ ວາງມາດຕະການອັນຈໍາເປັນ ເພື່ອປະຕິບັດແຜນການປະຈໍາປີ ຂອງຕົນ;
12. ສະເໜີອົງການປົກຄອງແຂວງ, ນະຄອນຫຼວງ ໃນການຍ້ອງຍໍ ການຈັດຕັ້ງ ຫຼື ບຸກຄົນ ທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນພັດທະນາວຽກງານອຸດສາຫະກໍາ ແລະ ການຄ້າ;
13. ປະຕິບັດສິດອື່ນ ທີ່ຂັ້ນເທິງມອບໝາຍໃຫ້ສະເພາະ ຫຼື ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ໂຄງປະກອບກົງຈັກການຈັດຕັ້ງ ຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ແມ່ນຂຶ້ນກັບການຕົກລົງຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ ໂດຍອີງໃສ່ສະພາບຈຸດພິເສດຂອງແຕ່ລະທ້ອງຖິ່ນບົນພື້ນຖານຕາມທິດທາງກົງຈັກກະທັດຮັດ, ໜັກແໜ້ນ, ເຂັ້ມແຂງ, ເຄື່ອນໄຫວມີປະສິດທິພາບ ແລະ ປະສິດທິຜົນ ໂດຍການເຫັນດີເປັນເອກະພາບກັບກະຊວງອຸດສາຫະກຳ ແລະ ການຄ້າ ເສຍກ່ອນ.

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

ໂຄງປະກອບດ້ານບຸກຄະລາກອນ ຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ປະກອບດ້ວຍ:

1. ຫົວໜ້າພະແນກ 01 ທ່ານ ຮັບຜິດຊອບຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ລັດຖະ ມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ໃນການຄຸ້ມຄອງຕາມຂະແໜງການທີ່ຕົນຮັບຜິດຊອບ ຊຶ່ງມີສິດ ແລະ ໜ້າທີ່ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

   ໃນເວລາຫົວໜ້າພະແນກຕິດຂັດ ຕ້ອງມອບສິດເປັນລາຍລັກອັກສອນ ໃຫ້ຮອງຫົວໜ້າພະແນກທ່ານໃດໜຶ່ງເປັນຜູ້ຮັກສາການແທນ;

2. ຮອງຫົວໜ້າພະແນກຈຳນວນໜຶ່ງ (ຕາມການກຳນົດຕຳແໜ່ງງານ), ຮອງຫົວໜ້າພະແນກ ຊ່ວຍຫົວໜ້າພະແນກ ແລະ ລົງເລິກຮັບຜິດຊອບ-ຊີ້ນຳວຽກງານໃດໜຶ່ງ ຕາມການມອບໝາຍຂອງຫົວໜ້າພະແນກ;

   ຮອງຫົວໜ້າພະແນກຜູ້ຮັກສາການແທນ ຕ້ອງລາຍງານວຽກງານທີ່ໄດ້ຈັດຕັ້ງປະຕິບັດໃນໄລຍະຮັກສາການແທນນັ້ນ ໃຫ້ຫົວໜ້າພະແນກ ພາຍຫຼັງກັບມາປະຈຳການ.

3. ຫົວໜ້າຂະແໜງ, ຮອງຫົວໜ້າຂະແໜງ ແລະ ລັດຖະກອນວິຊາການຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ;

   ການບັນຈຸສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກຳນົດໄວ້ (ທຸກໆກໍລະນີ ຕ້ອງຂໍຄວາມເຫັນເປັນເອກະພາບຈາກກະຊວງສາຍຕັ້ງ ເສຍກ່ອນ).

## ໝວດທີ 4
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 7 ຫຼັກການ**

ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ເຄື່ອນໄຫວວຽກງານຕາມຫຼັກການດັ່ງນີ້:

1. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະກ່ຽວກັບບັນຫາລວມຂອງພະແນກ;
2. ປະຕິບັດລະບອບຫົວໜ້າດຽວ ບົນພື້ນຖານມີການແບ່ງງານ ໃຫ້ແຕ່ລະບຸກຄົນຮັບຜິດຊອບຢ່າງລະອຽດຈະແຈ້ງ ຕາມຕຳແໜ່ງງານ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານ-ລັດຖະກອນທຸກລະດັບ; ນຳໃຊ້ຄວາມຮູ້ຄວາມສາມາດຂອງຕົນຢ່າງສຸດຂີດ ເພື່ອເຮັດສຳເລັດໜ້າທີ່ວຽກງານທີ່ຕົນໄດ້ຮັບມອບໝາຍ, ເຄົາລົບ ແລະ ປະຕິບັດກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ;
3. ທຸກການເຄື່ອນໄຫວຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ແລະ ພະນັກງານ-ລັດຖະກອນທຸກຄົນ ແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມ ຂອງລັດຖະບານ, ນຳເອົາແນວທາງນະໂຍບາຍ ຂອງພັກ, ລັດຖະບານ, ແຜນຍຸດທະສາດ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ແລະ ແຜນພັດທະນາ ຂອງອຳນາດການປົກຄອງທ້ອງຖິ່ນ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນເປັນຈິງ.

**ມາດຕາ 8 ແບບແຜນວິທີເຮັດວຽກ**

ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ; ປະຕິບັດ ແລະ ແກ້ໄຂວຽກງານ ຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ; ປະສານງານ ແລະ ສົມທົບຢ່າງແໜ້ນແຟ້ນ ກັບທຸກພາກສ່ວນ ທັງສູນກາງ, ທ້ອງຖິ່ນ ແລະ ອົງການຈັດຕັ້ງຕ່າງໆ ຕາມກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງກະຊວງ, ຂອງແຂວງ ແລະ ຂອງນະຄອນຫຼວງວຽງຈັນ;
2. ເຮັດວຽກ ມີການກວດກາ, ຕິດຕາມ, ຊຸກຍູ້, ສະຫຼຸບຖອດຖອນບົດຮຽນ, ຕີລາຄາຜົນໄດ້ຜົນເສຍ ພ້ອມທັງປະຕິບັດລະບອບລາຍງານ ຢ່າງເປັນປົກກະຕິ ແລະ ເຂັ້ມງວດ;
3. ປະຕິບັດລະບອບປະຊຸມ ປະຈຳເດືອນ, 03 ເດືອນ, 06 ເດືອນ, ປະຈຳປີ, ປະຕິບັດລະບອບລາຍງານໃຫ້ກະຊວງ, ແຂວງ ແລະ ນະຄອນຫຼວງວຽງຈັນ ຢ່າງເປັນປົກກະຕິ;
4. ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ມີການປະສານສົມທົບພົວພັນຮ່ວມມືກັບບັນດາພະແນກການຕ່າງໆ ເພື່ອຮ່ວມກັນຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງຕາມການແບ່ງຄວາມຮັບຜິດຊອບ ລະຫວ່າງຂະແໜງການສາຍຕັ້ງຂັ້ນກະຊວງ ແລະ ຂະແໜງການສາຍຂວາງຂັ້ນແຂວງ, ນະຄອນຫຼວງວຽງຈັນ ມອບໝາຍໃຫ້ເປັນໜ້າທີ່ຕົ້ນຕໍຕາມພາລະບົດບາດຄຸ້ມຄອງຂອງຕົນ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 9 ງົບປະມານ ແລະ ຕາປະທັບ**

ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ມີງົບປະມານ ແລະ ຕາປະທັບ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການຂອງຕົນ ຕາມລະບຽບການ;

ຫ້ອງການບໍລິຫານຂອງພະແນກ ແລະ ບັນດາຂະແໜງ ຖ້າມີຄວາມຈຳເປັນໃຊ້ຕາປະທັບ ເພື່ອເຄື່ອນໄຫວວຽກງານທາງລັດຖະການຕາມຂອບເຂດສິດ ແລະ ຄວາມຮັບຜິດຊອບຂອງຕົນ ໃຫ້ສະເໜີເຖິງກະຊວງ ເພື່ອພິຈາລະນາເປັນແຕ່ລະກໍລະນີ ຕາມລະບຽບການທີ່ກຳນົດໄວ້.

**ມາດຕາ 10 ການຈັດຕັ້ງປະຕິບັດ**

ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ຄົ້ນຄວ້າ, ຜັນຂະຫຍາຍ ຂໍ້ຕົກລົງສະບັບນີ້ ເປັນຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງຂອງຕົນ ໃຫ້ສອດຄ່ອງຕາມສະພາບຈຸດພິເສດຂອງແຂວງ ແລ້ວສະເໜີແຂວງລົງລາຍເຊັນ ແລະ ປະກາດໃຊ້ ພ້ອມທັງຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ; ບັນດາພະແນກການ ແລະ ອົງການທຽບເທົ່າພະແນກ, ອົງການປົກຄອງທ້ອງຖິ່ນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

**ມາດຕາ 11 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ມະໄລທອງ ກົມມະສິດ